# ຂໍ້ມູນທົ່ວໄປສໍາລັບໂຄງການ SUN Bucks ປີ 2026



## ໂຄງການ SUN Bucks ແມ່ນຫຍັງ?

ໂຄງການ SUN Bucks ມອບເງິນຈໍານວນ 120 ໂດລາຕໍ່ເດັກແຕ່ລະຄົນທີ່ມີຄຸນສົມບັດຕາມເກນ ໃຫ້ແກ່ຄອບຄົວຕ່າງໆ ເພື່ອຊື້ເຄື່ອງຍ່ອຍໃນຊ່ວງລະດູຮ້ອນເມື່ອໂຮງຮຽນປິດເທີມ. ສາມາດໃຊ້ບັດ SUN Bucks ໄດ້ທຸກແຫ່ງທີ່ຮັບບັດ CalFresh EBT. **ການໄດ້ຮັບສິດປະໂຫຍດ SUN Bucks ບໍ່ມີຜົນກະທົບຕໍ່ສະຖານະຄົນເຂົ້າເມືອງຂອງຄອບຄົວທ່ານ.**

## ການລົງທະບຽນອັດຕະໂນມັດເພື່ອເຂົ້າຮ່ວມໂຄງການ SUN Bucks ປີ 2026



ເດັກນ້ອຍອາຍຸ 6-18 ປີ ທີ່ໄດ້ຮັບ CalFresh, CalWORKs ແລະ/ຫຼື Medi-Cal ທີ່ມີລາຍໄດ້ຢູ່ທີ່ ຫຼື ຕໍ່າກວ່າ 185% ຂອງລະດັບຄວາມຍາກຈົນແຫ່ງຊາດ (FPL) ຈະໄດ້ຮັບສິດປະໂຫຍດ SUN Bucks ໂດຍອັດຕະໂນມັດ. ນັກຮຽນທີ່ມີສິດໄດ້ຮັບອາຫານທີ່ໂຮງຮຽນຟຣີ ຫຼື ຫຼຸດລາຄາ ໂດຍພິຈາລະນາຈາກສິດໃນການໄດ້ຮັບສະຫວັດດີການຂອງລັດ ຫຼື ສະຖານະເປັນຜູ້ອົບພະຍົບ, ບໍ່ມີບ້ານຢູ່, ຫຼື ເປັນເດັກອຸປະຖໍາ ຈະໄດ້ຮັບສິດປະໂຫຍດ SUN Bucks ໂດຍອັດຕະໂນມັດເຊັ່ນກັນ.

## ຈະຂໍຮັບບັດ SUN Bucks ໄດ້ວິທີໃດ?



ຖ້າລູກຂອງທ່ານບໍ່ໄດ້ຮັບການລົງທະບຽນໃນໂຄງການ SUN Bucks ໂດຍອັດຕະໂນມັດ ທ່ານຕ້ອງຍື່ນໃບສະໝັກໃຫ້ໂຮງຮຽນ ຫຼື ເຂດການສຶກສາຂອງລູກຂອງທ່ານ **ພາຍໃນວັນທີ 31 ສິງຫາ 2026** ເພື່ອກວດສອບວ່າມີຄຸນສົມບັດຕາມເກນ ຫຼື ບໍ່.

ນັກຮຽນທີ່ບໍ່ໄດ້ຮັບຄວາມຊ່ວຍເຫຼືອຈາກພາກລັດ ແລະບໍ່ໄດ້ຮັບການລະບຸຈາກໂຮງຮຽນວ່າເປັນນັກຮຽນທີ່ເປັນຜູ້ອົບພະຍົບ, ບໍ່ມີບ້ານຢູ່ ຫຼື ນເປັນເດັກອຸປະຖໍາ **ຕ້ອງ** ຍື່ນສະໝັກເພື່ອຂໍໃຫ້ມີການພິຈາລະນາສິດໃນການໄດ້ຮັບສິດປະໂຫຍດ SUN Bucks. ການໄດ້ຮັບອາຫານໃນໂຮງຮຽນຟຣີ**ບໍ່**ຮັບປະກັນວ່າເປັນການລົງທະບຽນໃນໂຄງການ SUN Bucks.

ສະເພາະເດັກນ້ອຍທີ່ໄດ້ຮັບສິດປະໂຫຍດ Medi-Cal ເທົ່ານັ້ນຈະໄດ້ຮັບເງິນຊ່ວຍເຫຼືອ SUN Bucks ໂດຍອັດຕະໂນມັດ ຖ້າລາຍໄດ້ຂອງຄອບຄົວຢູ່ທີ່ລະດັບ ຫຼືຕໍ່າກວ່າ 185% ຂອງ FPL. ຕົວຢ່າງ ເຊັ່ນ ເດັກນ້ອຍທີ່ໄດ້ຮັບ Medi-Cal ແລະ ລາຍໄດ້ປະກັນສັງຄົມເສີມ (SSI/SSP), ເງິນຊ່ວຍເຫຼືອໃນການດູແລເດັກອຸປະການະ (AAP), ເງິນຊ່ວຍເຫຼືອຜູ້ປົກຄອງທີ່ເປັນຍາດພີ່ນ້ອງ (KIN GAP) ເງິນສົດ ຫຼື ເງິນຊ່ວຍເຫຼືອໃນການດູແລເດັກອຸປະຖໍາ (FC) ຈະຕ້ອງຍື່ນສະໝັກເນື່ອງຈາກສິດໃນ Medi-Cal ຂອງຄອບຄົວເຫຼົ່ານີ້ບໍ່ໄດ້ຮັບການຮັບຮອງວ່າມີລາຍໄດ້ເທົ່າກັບ ຫຼື ຕໍ່າກວ່າ 185% ຂອງ FPL. ຖ້າທ່ານບໍ່ແນ່ໃຈ ກະລຸນາສະໝັກ.

## ການແຈ້ງເຕືອນຄວາມຈໍາ:

- **ທ່ານໄດ້ຍ້າຍທີ່ຢູ່ໃໝ່ເມື່ອບໍ່ດົນມານີ້ບໍ? ອັບເດດຂໍ້ມູນການຕິດຕໍ່ຂອງທ່ານ**ກັບໂຮງຮຽນຂອງລູກຂອງທ່ານ ຫຼື ກັບຫ້ອງການບໍລິຫານຂອງໂຮງຮຽນ, ຫ້ອງການສັງຄົມສົງເຄາະຂອງເຄົາຕີ້ໃນທ້ອງຖິ່ນ ຂອງທ່ານ ຫຼື ທີ່ BenefitsCal.com.
- **ລາຍງານບັນຫາກ່ຽວກັບບັດ SUN Bucks ໄປທີ່ສາຍດ່ວນ SUN Bucks Helpline ທີ່ເບີ (877) 328-9677.** ຄອບຄົວບໍ່ມີສິດໄດ້ຮັບບັດ SUN Bucks ໄດ້ຫຼາຍກວ່າໜຶ່ງໃບຕໍ່ເດັກນ້ອຍໜຶ່ງຄົນ ຫຼື ໄດ້ຮັບບັດ SUN Bucks ຈາກຫຼາຍກວ່າໜຶ່ງລັດ.
- **ບັດ SUN Bucks ຈະໝົດອາຍຸ 122 ວັນຫຼັງຈາກທີ່ມີການເຕີມເງິນໃສ່ໃນບັດ.** ຂໍສະໜັບສະໜູນໃຫ້ຄອບຄົວໃຊ້ເງິນ SUN Bucks ຂອງທ່ານກ່ອນໃຊ້ສິດປະໂຫຍດ CalFresh. ກວດເບິ່ງລາຍລະອຽດຍອດເງິນຄົງເຫຼືອຂອງທ່ານທີ່ www.ebtedge.com.

## ຕ້ອງການຮຽນຮູ້ເພີ່ມເຕີມບໍ?

- ເຂົ້າເບິ່ງ www.cdss.ca.gov/sun-bucks ຫຼື ສະແກນລະຫັດ QR.

ສະຖາບັນນີ້ເປັນຜູ້ໃຫ້ບໍລິການທີ່ໃຫ້ໂອກາດເທົ່າທຽມກັນ. ໂຄງການ SUN Bucks ໄດ້ຮັບທຶນສະໜັບສະໜູນຈາກກະຊວງກະສິກໍາ, ອາຫານ ແລະ ໂພຊະນາການຂອງສະຫະລັດ ອາເມຣິກາ.

2026 | ສໍາລັບຂໍ້ມູນເພີ່ມເຕີມ ໄປທີ່: www.fns.usda.gov/summer.
www.cde.ca.gov/ls/nu/sf | SUNBucks@dss.ca.gov